ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ເລກທີ 1382/ຈຂ.ຫພ.

ຫົວພັນ, ວັນທີ 14/11/2019

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV ມາດຕາທີ 20 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ຄູ່ມືແນະນຳ ກ່ຽວກັບ ຕົວເມືອງທີ່ມີຄວາມຍືນຍົງດ້ານສິ່ງແວດລ້ອມ ຂອງ ສປປ ລາວ ສະບັບເດືອນ ເມສາ ປີ 2018;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງຫົວພັນຊຸດທີ I ສະບັບເລກທີ 338/ສພຂ, ລົງວັນທີ 26 ກໍລະກົດ 2019.

## ເຈົ້າແຂວງຕົກລົງ:
## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ຕົວຊີ້ວັດເພື່ອຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ຢູ່ບັນດາເທດສະບານຕົວເມືອງ 10 ເມືອງ ຂອງແຂວງຫົວພັນ ແນໃສ່ເພີ່ມທະວີວຽກງານ ຂຽວ ສະອາດ ງາມຕາ ໃນຕົວເມືອງ ຮັບປະກັນການພັດທະນາຕົວເມືອງໃຫ້ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ມີຄຸນນະພາບສິ່ງແວດລ້ອມທີ່ດີ, ຊ່ວຍຫຼຸດຜ່ອນບັນຫາມົນລະພິດ, ສານເຄມີທີ່ເປັນພິດ ແລະ ສິ່ງເສດເຫຼືອທີ່ອັນຕະລາຍເພື່ອສ້າງ ແຂວງຫົວພັນ ໃຫ້ກາຍເປັນແຂວງ ຂຽວ ສະອາດ ງາມຕາ.

### ມາດຕາ 2 ວຽກງານ ຂຽວ ສະອາດ ງາມຕາ

ວຽກງານ ຂຽວ ສະອາດ ງາມຕາ ແມ່ນທຸກສິ່ງທຸກຢ່າງທີ່ຕິດພັນກັບການດຳລົງຊີວິດຂອງຄົນ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຕິດພັນກັບການພັດທະນາເສດຖະກິດ - ສັງຄົມ, ປະສະຈາກມົນລະພິດຕ່າງໆ ທີ່ສົ່ງຜົນກະທົບທາງລົບຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ເຮັດໃຫ້ສິ່ງແວດລ້ອມຕົວເມືອງມີຄວາມຍືນຍົງ.

### ມາດຕາ 3 ການອະທິບາຍຄຳສັບ

1. **ຂຽວ** ໝາຍເຖິງ ການເພີ່ມພື້ນທີ່ສີຂຽວ ເຂດທີ່ມີຕົ້ນໄມ້ໃຫ້ຄວາມຮົ່ມເຢັນ ແລະ ມີອາກາດສົດຊື່ນ, ມີຄວາມອຸດົມສົມບູນຂອງພືດພັນຕ່າງໆ ເຊັ່ນ: ສວນສາທາລະນະ, ສວນຄົວ, ສວນດອກໄມ້ປະດັບ, ເດີ່ນຫຍ້າ, ມີຕົ້ນໄມ້ແຄມທາງ, ແຄມນ້ຳ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ;

2. **ສະອາດ** ໝາຍເຖິງ ອາກາດບໍລິສຸດ, ນ້ຳສະອາດ, ດິນບໍ່ມີສານປົນເປື້ອນ ແລະ ປະສະຈາກຂີ້ເຫຍື້ອ ລວມທັງຄວາມສະອາດຂອງສະຖານທີ່ເຊັ່ນ: ທີ່ຢູ່ອາໃສ, ສະຖານທີ່ບໍລິການ ແລະ ຖະໜົນຫົນທາງ;

3. **ງາມຕາ** ໝາຍເຖິງ ການຈັດສັນ ແລະ ການຕົບແຕ່ງ ຫຼື ປະດັບປະດາ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຈົບງາມ;

4. **ສິ່ງແວດລ້ອມ** ໝາຍເຖິງທຸກສິ່ງທຸກຢ່າງທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນ ທີ່ຢູ່ອ້ອມເປົ້າໝາຍໃດໜຶ່ງ ເຊັ່ນ: ດິນ, ສັດ, ພືດ ແລະ ອື່ນໆ ທີ່ມີສາຍພົວພັນ ແລະ ສົ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ, ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ ສິ່ງແວດລ້ອມປະກອບມີສິ່ງແວດລ້ອມທຳມະຊາດ ແລະ ສິ່ງແວດລ້ອມທາງສັງຄົມ;

5. **ສິ່ງແວດລ້ອມທຳມະຊາດ** ໝາຍເຖິງທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນເຊິ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ;

6. **ສິ່ງແວດລ້ອມທາງດ້ານສັງຄົມ** ໝາຍເຖິງທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມທີ່ມະນຸດສ້າງຂຶ້ນ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ສິ່ງແວດລ້ອມ;

7. **ການຟື້ນຟູສິ່ງແວດລ້ອມ** ໝາຍເຖິງການເຮັດໃຫ້ສິ່ງແວດລ້ອມທີ່ຖືກທຳລາຍ ຫຼື ເຊື່ອມໂຊມແລ້ວມີການຟື້ນຕົວ ແລະ ໄດ້ຮັບການປ່ຽນແປງໃຫ້ຢູ່ໃນສະພາບດີຂຶ້ນ ແລະ ມີລະບົບນິເວດສົມບູນຂຶ້ນ;

8. **ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ** ໝາຍເຖິງການສຶກສາ, ສຳຫຼວດ ແລະ ຄົ້ນຄວ້າວິໄຈຂໍ້ມູນ ເພື່ອຄາດຄະເນຜົນກະທົບເບື້ອງຕົ້ນຕໍ່ສິ່ງແວດລ້ອມທີ່ບໍ່ຮຸນແຮງ ຊຶ່ງອາດຈະເກີດຂຶ້ນ ພ້ອມທັງກຳນົດວິທີການ ແລະ ມາດຕະການທີ່ເໝາະສົມ ເພື່ອປ້ອງກັນ, ຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ລວມທັງການພິຈາລະນາບັນຫາທີ່ພົວພັນກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ;

9. **ການພັດທະນາແບບຍືນຍົງ** ໝາຍເຖິງການພັດທະນາເສດຖະກິດ - ສັງຄົມ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ທີ່ບໍ່ມີຜົນກະທົບຕໍ່ຄົນຮຸ່ນຕໍ່ໆໄປໃນອະນາຄົດ;

10. **ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ** ໝາຍເຖິງການກຳນົດໜ້າວຽກ, ກິດຈະກຳຂອງໂຄງການ, ຜົນກະທົບທີ່ອາດຈະເກີດຂຶ້ນ, ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ໄພພິບັດ, ມາດຕະການປ້ອງກັນ, ຫຼຸດຜ່ອນ, ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ, ອຸປະຕິເຫດ ຫຼື ເຫດການສຸກເສີນ ທີ່ອາດຈະເກີດຂຶ້ນ, ການບູລະນະຟື້ນຟູສິ່ງແວດລ້ອມ, ກຳນົດເວລາ, ງົບປະມານ ແລະ ຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ, ແຜນການຕິດຕາມກວດກາຂອງເຈົ້າຂອງໂຄງການ ແລະ ຂະແໜງການກ່ຽວຂ້ອງຂອງລັດ;

11. **ເຕັກໂນໂລຊີສະອາດ** ໝາຍເຖິງເຄື່ອງຈັກ ແລະ ອຸປະກອນຮັບໃຊ້ ທີ່ນຳໃຊ້ເຂົ້າໃນຂະບວນການຜະລິດ ແລະ ການບໍລິການ ທີ່ບໍ່ສ້າງມົນລະພິດ ຫຼື ສິ່ງເສດເຫຼືອ ແລະ ການນຳໃຊ້ພະລັງງານໜ້ອຍທີ່ສຸດ ເພື່ອບໍ່ໃຫ້ມີຜົນກະທົບ ແລະ ອັນຕະລາຍຕໍ່ສິ່ງແວດລ້ອມ;

12. **ສານເຄມີເປັນພິດ** ໝາຍເຖິງວັດຖຸ ຫຼື ທາດເບື່ອ ທີ່ເຈືອປົນໃນອາກາດ, ດິນ ແລະ ນ້ຳ ຊຶ່ງສົ່ງຜົນສະທ້ອນອັນບໍ່ດີຕໍ່ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ;

13. **ຊີວະນາໆພັນ** ໝາຍເຖິງຄວາມຫຼາກຫຼາຍຂອງຊະນິດພັນພືດ, ສັດ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;

14. **ສິ່ງເສດເຫຼືອ** ໝາຍເຖິງວັດຖຸ, ສານເຄມີ ຫຼື ສິ່ງໃດໜຶ່ງທີ່ບຸກຄົນ ຫຼື ນິຕິບຸກຄົນ ບໍ່ຕ້ອງການ ຫຼື ບໍ່ສາມາດນຳມາໃຊ້ໄດ້ອີກ ເຊັ່ນ: ນ້ຳມັນເຄື່ອງທີ່ຜ່ານການປ່ຽນຖ່າຍ, ຂີ້ເຫຍື້ອ, ນ້ຳເປື້ອນ ແລະ ສິ່ງອື່ນໆ ທີ່ເປັນພິດ ແລະ ບໍ່ເປັນພິດ;

15. **ລະບົບນິເວດ** ໝາຍເຖິງສາຍກ່ຽວພັນເຊື່ອງກັນ ແລະ ກັນ ທັງທາງບວກ ແລະ ທາງລົບ ລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;

16. **ອພບຕ** ໝາຍເຖິງ ອົງການ ພັດທະນາ ແລະ ບໍລິຫານຕົວເມືອງ;

17. **ທາດກຳມັນຕະພາບລັງສີ** ໝາຍເຖິງທາດທີ່ແຜ່ກະຈາຍອະນຸພາບລັງສີຢ່າງຕໍ່ເນື່ອງ ຊຶ່ງເປັນອັນຕະລາຍຕໍ່ຮ່າງກາຍ ຫຼື ຈຸລັງຂອງສິ່ງທີ່ມີຊີວິດ;

18. **ສວນຄົວ** ໝາຍເຖິງພື້ນທີ່ປູກຜັກ, ພືດລົ້ມລຸກ ແລະ ຕົ້ນໄມ້ໃຫ້ໝາກບາງຊະນິດ ພາຍໃນຄອບຄົວ.

**ມາດຕາ 4 ນະໂຍບາຍຂອງລັດ ຕໍ່ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ**

ລັດສົ່ງເສີມການສ້າງຕົວເມືອງໃຫ້ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ໂດຍການໂຄສະນາເຜີຍແຜ່ ຄູ່ມືແນະນຳ, ຂໍ້ມູນຂ່າວສານຕ່າງໆຜ່ານທາງສື່ມວນຊົນ, ໜັງສືພິມ, ການສ້າງຈິດສຳນຶກຄວາມຮັບຮູ້ ແລະ ສຶກສາອົບຮົມ ລວມທັງການປຸກລະດົມບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນແລະຕ່າງປະເທດ ໃຫ້ເຫັນໄດ້ ຄວາມສຳຄັນຂອງການຄຸ້ມຄອງສິ່ງແວດລ້ອມຕົວເມືອງ ຕໍ່ກັບການດຳລົງຊີວິດປະຈຳວັນ, ການປະຕິບັດລະບຽບຫຼັກການ, ວິທີການ ແລະ ມາດຕະການ ກ່ຽວກັບ ວຽກງານຂຽວ ສະອາດ ງາມຕາ;

ລັດຊຸກຍູ້ສົ່ງເສີມສ້າງຕົວເມືອງໃຫ້ມີຄວາມຍືນຍົງ ດ້ານສິ່ງແວດລ້ອມ ຕາມເອກະລັກ, ລັກສະນະຂອງ ສປປ ລາວ ແລະ ວິໄສທັດຂອງ ແຂວງຫົວພັນ ໂດຍແນໃສ່ເຮັດໃຫ້ການພັດທະນາເສດຖະກິດ - ສັງຄົມ ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ແລະ ກ້າວໄປສູ່ ການກາຍເປັນຕົວເມືອງທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ກາຍເປັນຄວາມຮັບຜິດຊອບຂອງສັງຄົມຢ່າງແທ້ຈິງ.

**ມາດຕາ 5 ຫຼັກການ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ**

1. ພັດທະນາເສດຖະກິດ - ສັງຄົມ ຕິດພັນກັບການປົກຮັກສາສິ່ງແວດລ້ອມແບບຍືນຍົງ ແລະ ຖືເອົາການຈັດຕັ້ງຜັນຂະຫຍາຍວຽກງານຂຽວ ສະອາດ ງາມຕາ ເປັນສຳຄັນ;

2. ເອົາການປ້ອງກັນສິ່ງແວດລ້ອມຕົວເມືອງເປັນວຽກງານຕົ້ນຕໍ ແລະ ການບູລະນະຟື້ນຟູ ເປັນວຽກງານສຳຄັນ;

3. ມີການເຂົ້າຮ່ວມ ແລະ ປຶກສາຫາລືຢ່າງເປັນເຈົ້າການຂອງບຸກຄົນ ແລະ ການຈັດຕັ້ງ, ໃນການຈັດຕັ້ງປະຕິບັດວຽກງານຂຽວ ສະອາດ ງາມຕາ;

4. ນຳໃຊ້ຊັບພະຍາກອນທຳມະຊາດຢ່າງປະຢັດ, ສົມເຫດສົມຜົນ, ໃຫ້ເກີດປະໂຫຍດສູງສຸດ ແລະ ມີຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ;

5. ຮັບຜິດຊອບຕໍ່ຜົນເສຍຫາຍ ດ້ານສິ່ງແວດລ້ອມທີ່ຕົນໄດ້ສ້າງຂຶ້ນ ແລະ ການປະຕິບັດມາດຖານຄວບຄຸມມົນລະພິດ ແມ່ນພັນທະຂອງຜູ້ກໍ່ຄວາມເສຍຫາຍ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຄົວເຮືອນ, ບ້ານ, ໂຮງຮຽນ, ຫ້ອງການສຳນັກງານ ພາກລັດ ແລະ ເອກະຊົນ, ສະຖານທີ່ບໍລິການເປັນຕົ້ນ ສະຖານທີ່ທ່ອງທ່ຽວ, ຕະຫຼາດ, ສະໜາມບິນ, ຄິວລົດ, ໂຮງໝໍ, ຮ້ານອາຫານ, ບ້ານພັກ, ໂຮງແຮມ ແລະ ສະຖານທີ່ອື່ນໆ ໃນເທດສະບານເມືອງ 10 ເມືອງຂອງ ແຂວງຫົວພັນ.

# ພາກທີ II
# ຕົວຊີ້ວັດ ໃນການຈັດຕັ້ງປະຕິບັດ
## ໝວດທີ 1
## ຕົວຊີ້ວັດວຽກງານ ຂຽວ

**ມາດຕາ 7 ກິດຈະການລົງທຶນຕ່າງໆ**

ຕົວຊີ້ວັດສໍາລັບກິດຈະການລົງທຶນຕ່າງໆມີດັ່ງນີ້:

ທຸກກິດຈະການລົງທຶນທັງພາກລັດ ແລະ ເອກະຊົນ ຕ້ອງໄດ້ສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງກິດຈະການລົງທຶນກ່ອນການເຊັນສັນຍາສໍາປະທານໂຄງການ ຫຼື ກ່ອນເລີ່ມລົງມືກໍ່ສ້າງໂຄງການໃດໜຶ່ງ ຕ້ອງມີໃບຢັ້ງຢືນຮັບຮອງດ້ານສິ່ງແວດລ້ອມຂອງກິດຈະການ ຫຼື ໂຄງການ ຈາກພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດ ລ້ອມແຂວງ ສໍາລັບບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ຈາກຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ, ສໍາລັບ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ.

**ມາດຕາ 8 ເທດສະບານເມືອງ**

ຕົວຊີ້ວັດສໍາລັບຕົວເມືອງຊຶ່ງປະກອບມີສະຖານທີ່ບໍລິການຕ່າງໆ ເຊັ່ນ: ສະຖານທີ່ບໍລິການ, ສະຖານທີ່ທ່ອງທ່ຽວ, ຕະຫຼາດ, ສະໜາມບິນ, ຄິວລົດ, ໂຮງໝໍ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ ມີດັ່ງນີ້:

- ມີຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ, ປະດັບ ຫຼື ຕົ້ນໄມ້ທໍາມະຊາດທີ່ມີແລ້ວລຽບຕາມຖະໜົນ ແລະ ສະຖານທີ່ ສາທາລະນະພາຍໃນເທດສະບານເມືອງ ກວມ 20% ຂອງພື້ນທີ່ຂຶ້ນໄປ;
- ມີສວນສາທາລະນະຂະໜາດນ້ອຍ ຫຼື ສວນດອກໄມ້ທີ່ມີການຕົບແຕ່ງດ້ວຍຄວາມຈົບງາມຢ່າງໜ້ອຍ 1 ແຫ່ງຂຶ້ນໄປ;
- ເປັນເຈົ້າການປະຢັດພະລັງງານ ແລະ ນໍາໃຊ້ຊັບພະຍາກອນແບບມີປະສິດທິຜົນເປັນຕົ້ນແມ່ນ: ການນໍາໃຊ້ນໍ້າ, ໄຟຟ້າ ແລະ ອຸປະກອນຮັບໃຊ້ແບບປະຢັດເຊິ່ງມີລະບຽບຄຸ້ມຄອງ ແລະ ຕິດຕາມສະເພາະ.

**ມາດຕາ 9 ຫ້ອງການສໍານັກງານ ພາກລັດ ແລະ ເອກະຊົນ**

ຕົວຊີ້ວັດສໍາລັບຫ້ອງການ ພາກລັດ ແລະ ເອກະຊົນມີດັ່ງນີ້:

- ມີຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບ ກວມເອົາ 10% ຂອງພື້ນທີ່ຂຶ້ນໄປ;
- ມີສວນດອກໄມ້, ໂຖດອກໄມ້ ຫຼື ເດີ່ນຫຍ້າທີ່ມີການຕົບແຕ່ງດ້ວຍຄວາມຈົບງາມຢ່າງໜ້ອຍ 1 ແຫ່ງຂຶ້ນໄປ;
- ເປັນເຈົ້າການປະຢັດພະລັງງານ ແລະ ນໍາໃຊ້ຊັບພະຍາກອນແບບມີປະສິດທິຜົນເປັນຕົ້ນແມ່ນ: ການນໍາໃຊ້ນໍ້າ, ໄຟຟ້າ ແລະ ອຸປະກອນຮັບໃຊ້ແບບປະຢັດເຊິ່ງມີລະບຽບຄຸ້ມຄອງ ແລະ ຕິດຕາມສະເພາະ.

**ມາດຕາ 10 ໂຮງຮຽນ**

ຕົວຊີ້ວັດສໍາລັບ ໂຮງຮຽນມີດັ່ງນີ້:

- ມີຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບກວມເອົາ 20% ຂອງພື້ນທີ່ຂຶ້ນໄປ;
- ມີສວນດອກໄມ້, ໂຖດອກໄມ້ ຫຼື ເດີ່ນຫຍ້າທີ່ມີການຕົບແຕ່ງດ້ວຍຄວາມຈົບງາມຢ່າງໜ້ອຍ 1 ແຫ່ງຂຶ້ນໄປ;

- ເປັນເຈົ້າການປະຢັດພະລັງງານ ແລະ ນຳໃຊ້ຊັບພະຍາກອນແບບມີປະສິດທິຜົນເປັນຕົ້ນແມ່ນ: ການນຳໃຊ້ນ້ຳ, ໄຟຟ້າ ແລະ ອຸປະກອນຮັບໃຊ້ແບບປະຢັດ ເຊິ່ງມີລະບຽບຄຸ້ມຄອງ ແລະ ຕິດຕາມສະເພາະ.

**ມາດຕາ 11 ບ້ານ**

ຕົວຊີ້ວັດສຳລັບບ້ານມີດັ່ງນີ້:

- ກຳນົດໃຫ້ມີປ່າສະຫງວນຂອງບ້ານຢ່າງໜ້ອຍ 1 ແຫ່ງ (ຕາມເງື່ອນໄຂຂອງແຕ່ລະບ້ານ);
- ມີຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບລຽບຕາມຖະໜົນຫົນທາງ ແລະ ທາງຮ່ອມກວມ 20% ຂອງພື້ນທີ່ຂຶ້ນໄປ;
- ຄົວເຮືອນພາຍໃນບ້ານຕ້ອງມີສວນດອກໄມ້, ໂຖດອກໄມ້ ຫຼື ເດີ່ນຫຍ້າທີ່ມີການຕົບແຕ່ງດ້ວຍຄວາມຈົບງາມ ກວມ 80% ຂອງຈຳນວນຄົວເຮືອນພາຍໃນບ້ານ;
- ເປັນເຈົ້າການປະຢັດພະລັງງານ ແລະ ນຳໃຊ້ຊັບພະຍາກອນແບບມີປະສິດທິຜົນເປັນຕົ້ນແມ່ນ: ການນຳໃຊ້ນ້ຳ, ໄຟຟ້າ ແລະ ອຸປະກອນຮັບໃຊ້ແບບປະຢັດ ເຊິ່ງມີລະບຽບຄຸ້ມຄອງ ແລະ ຕິດຕາມສະເພາະ.

**ມາດຕາ 12 ຄົວເຮືອນ**

ຕົວຊີ້ວັດສຳລັບຄົວເຮືອນມີດັ່ງນີ້:

- ມີຕົ້ນໄມ້ໃຫ້ຮົ່ມ, ໃຫ້ໝາກ ແລະ ປະດັບຢ່າງໜ້ອຍກວມເອົາ 10% ຂອງພື້ນທີ່ຄົວເຮືອນຂຶ້ນໄປ;
- ມີໂຖດອກໄມ້,ສວນດອກໄມ້,ສວນຄົວ ຫຼື ເດີ່ນຫຍ້າທີ່ມີການຕົບແຕ່ງດ້ວຍຄວາມຈົບງາມຢ່າງໜ້ອຍ 1 ແຫ່ງຂຶ້ນໄປ;
- ເປັນເຈົ້າການປະຢັດພະລັງງານ ແລະ ນຳໃຊ້ຊັບພະຍາກອນແບບມີປະສິດທິຜົນເປັນຕົ້ນແມ່ນ: ການນຳໃຊ້ນ້ຳ, ໄຟຟ້າ ແລະ ອຸປະກອນຮັບໃຊ້ແບບປະຢັດເຊິ່ງມີລະບຽບຄຸ້ມຄອງ ແລະ ຕິດຕາມສະເພາະ.

## ໝວດທີ 2
## ຕົວຊີ້ວັດ ວຽກງານ ສະອາດ

**ມາດຕາ 13 ກິດຈະການລົງທຶນຕ່າງໆ**

ຕົວຊີ້ວັດສຳລັບກິດຈະການລົງທຶນຕ່າງໆມີດັ່ງນີ້:

- ມີສະຖານທີ່ເກັບມ້ຽນຂີ້ເຫຍື້ອເປັນລະບົບ 1-2 ຈຸດ;
- ມີຖັງຂີ້ເຫຍື້ອທີ່ແຍກປະເພດຂີ້ເຫຍື້ອປະໄວ້ຕາມຈຸດສຳຄັນຕ່າງໆ ໂດຍອີງຕາມປະເພດກິດຈະການລົງທຶນເຊັ່ນ: ຂະໜາດນ້ອຍ 3 ຈຸດຂຶ້ນໄປ, ກາງ 5 ຈຸດຂຶ້ນໄປ ແລະ ໃຫຍ່ 10 ຈຸດຂຶ້ນໄປ;
- ມີລະບົບລະບາຍນ້ຳເປື້ອນ, ນ້ຳຝົນ ແລະ ອ່າງບຳບັດນ້ຳເປື້ອນ ໃຫ້ໄດ້ 80% ຂຶ້ນໄປ;
- ມີປ້າຍແນະນຳຫຼືຂໍ້ຫ້າມຕ່າງໆ ກ່ຽວກັບການຮັກສາຄວາມປອດໄພ ຂອງພະນັກງານ, ກຳມະກອນໃຫ້ໄດ້ 90%;
- ມີລະບົບຫ້ອງນ້ຳທີ່ໄດ້ມາດຕະຖານ ແລະລະບົບນ້ຳລົ້ນໃຫ້ໄດ້ 80% ຂຶ້ນໄປ;
- ມີການເຮັດອະນາໄມລວມເປັນປົກກະຕິ 1 ຄັ້ງ/ທິດ.

**ມາດຕາ 14 ເທດສະບານເມືອງ ແລະ ສະຖານທີ່ບໍລິການຕ່າງໆ**

ຕົວຊີ້ວັດ ສຳລັບເທດສະບານເມືອງ ແລະ ສະຖານທີ່ບໍລິການຕ່າງໆເຊັ່ນ: ສະຖານທີ່ແຫຼ່ງທ່ອງທ່ຽວ, ຕະຫຼາດ, ສະໜາມບິນ, ຄິວລົດ, ໂຮງໝໍ, ໂຮງແຮມ, ເຮືອນພັກ ຮ້ານອາຫານ ແລະ ອື່ນໆມີດັ່ງນີ້:

- ມີສະໜາມກຳຈັດຂີ້ເຫຍື້ອລວມຂອງເມືອງ ຢ່າງໜ້ອຍ 1 ແຫ່ງຂຶ້ນໄປ;

- ມີຈຸດວາງຖັງຫຼື ກະຕ່າຂີ້ເຫຍື້ອຊົ່ວຄາວ ເພື່ອລໍຖ້າການຂົນສົ່ງ ຢ່າງໜ້ອຍ 2 ຈຸດຂຶ້ນໄປ ຫຼື ອີງຕາມເງື່ອນໄຂຕົວຈິງ;
- ມີການບໍລິການເກັບມ້ຽນ ແລະ ຂົນສົ່ງຂີ້ເຫຍື້ອໄປສະໜາມກຳຈັດ ເປັນປົກກະຕິຕາມລະບຽບການ;
- ມີການແຍກຂີ້ເຫຍື້ອໃຫ້ໄດ້ 50% ຂຶ້ນໄປ;
- ບໍ່ໃຫ້ມີສິ່ງເປິເປື້ອນເຊັ່ນ: ຂີ້ຝຸ່ນ, ຂີ້ເຫຍື້ອ, ນ້ຳເປື້ອນຊະຊາຍ ແລະ ອື່ນໆໃຫ້ໄດ້ 80% ຂຶ້ນໄປ;
- ມີລະບົບຮ່ອງລະບາຍນ້ຳເປື້ອນ ໄຫຼສູ່ຮ່ອງລະບາຍນ້ຳສາທາລະນະ, ໄດ້ມີການຄຸ້ມຄອງ ແລະ ເຮັດອະນາໄມ ເປັນປົກກະຕິ;
- ມີຫ້ອງນ້ຳສະອາດບໍລິການຢູ່ເຂດສວນສາທາລະນະພຽງພໍ ແລະ ໄດ້ມາດຕະຖານ.

**ມາດຕາ 15 ຫ້ອງການສຳນັກງານ ພາກລັດ ແລະ ເອກະຊົນ**

ຕົວຊີ້ວັດສຳລັບ ຫ້ອງການສຳນັກງານ ພາກລັດ ແລະ ເອກະຊົນ ມີດັ່ງນີ້:

- ມີຈຸດລວມເກັບມ້ຽນຂີ້ເຫຍື້ອເປັນລະບົບ;
- ມີການແຍກຂີ້ເຫຍື້ອ 100%;
- ມີຫ້ອງນ້ຳສະອາດ 100%;
- ບໍ່ໃຫ້ມີສິ່ງເປິເປື້ອນເຊັ່ນ: ຂີ້ຝຸ່ນ, ຂີ້ເຫຍື້ອ, ນ້ຳເປື້ອນ ແລະ ອື່ນໆຊະຊາຍໃຫ້ໄດ້ 90% ຂຶ້ນໄປ;
- ຫ້ອງການຕ້ອງຈັດສັນ, ຄຸ້ມຄອງ ແລະ ອະນາໄມ ເປັນລະບຽບຮຽບຮ້ອຍດີ;
- ມີລະບົບລະບາຍນ້ຳເປື້ອນ ໄປສູ່ຮ່ອງນ້ຳສາທາລະນະ, ໄດ້ຮັບການຄຸ້ມຄອງ ແລະ ອະນາໄມ ເປັນປົກກະຕິ.

**ມາດຕາ 16 ໂຮງຮຽນ.**

ຕົວຊີ້ວັດສຳລັບ ໂຮງຮຽນ ມີດັ່ງນີ້:

- ມີແຜນການຈັດຕັ້ງປະຕິບັດອະນາໄມບໍລິເວນໂຮງຮຽນເຊັ່ນ:ຕັດຫຍ້າ, ເກັບຂີ້ເຫຍື້ອ ແລະ ອື່ນໆ ເປັນປົກກະຕິ;
- ມີການເກັບມ້ຽນຂີ້ເຫຍື້ອ ແລະ ມີຈຸດລວມບ່ອນເກັບມ້ຽນຂີ້ເຫຍື້ອຂອງໂຮງຮຽນ 1 ຈຸດຂຶ້ນໄປ;
- ມີຖັງ ຫຼືກະຕ່າຂີ້ເຫຍື້ອ ໃນຫ້ອງ, ໂຮງຮຽນ ພຽງພໍ;
- ມີລະບົບລະບາຍນ້ຳເປື້ອນ ແລະ ນ້ຳຝົນ;
- ຫ້ອງການຄູອາຈານ ແລະ ຫ້ອງຮຽນຕ້ອງຈັດສັນ, ຄຸ້ມຄອງ ແລະ ອະນາໄມ ເປັນລະບຽບຮຽບຮ້ອຍດີ;
- ມີຫ້ອງນ້ຳສະອາດ ພຽງພໍ;
- ມີການແຍກຂີ້ເຫຍື້ອ 100%;
- ບໍ່ໃຫ້ມີສິ່ງເປິເປື້ອນເຊັ່ນ: ຂີ້ຝຸ່ນ, ຂີ້ເຫຍື້ອ, ນ້ຳເປື້ອນ ແລະ ອື່ນໆຊະຊາຍໃຫ້ໄດ້ 90% ຂຶ້ນໄປ;
- ບໍ່ໃຫ້ຈູດຂີ້ເຫຍື້ອຢູ່ໃນບໍລິເວນໂຮງຮຽນ ໃຫ້ໄດ້ 90% ຂຶ້ນໄປ.

**ມາດຕາ 17 ບ້ານ**

ຕົວຊີ້ວັດສຳລັບ ບ້ານ ມີດັ່ງນີ້:

- ມີຈຸດເກັບມ້ຽນຂີ້ເຫຍື້ອລວມຂອງບ້ານ ຫຼື ໜ້າເຮືອນໃຜລາວ ເປັນລະບົບ;
- ມີຫ້ອງນ້ຳລວມຂອງບ້ານ 1 ແຫ່ງຂຶ້ນໄປ;

- ມີການຄຸ້ມຄອງ ແລະ ອະນາໄມຮ່ອງລະບາຍນໍ້າເປື້ອນເປັນປົກກະຕິ;
- ບໍ່ໃຫ້ມີສິ່ງເປິເປື້ອນເຊັ່ນ: ຂີ້ເຫຍື້ອ ແລະ ນໍ້າເປື້ອນຊະຊາຍ ໃຫ້ໄດ້ 90% ຂຶ້ນໄປ;
- ບໍ່ໃຫ້ມີການຈູດຂີ້ເຫຍື້ອຢູ່ແຄມທາງ, ເດີ່ນເຮືອນຂອງປະຊາຊົນ ແລະ ດິນເປົ່າຫວ່າງໃຫ້ໄດ້ 100%;
- ບໍ່ໃຫ້ມີການປ່ອຍສັດລ້ຽງຊະຊາຍຕາມຊຸມຊົນບ້ານ ແລະ ສະຖານທີ່ສາທາລະນະໃຫ້ໄດ້ 90% ຂຶ້ນໄປ.

**ມາດຕາ 18 ຄົວເຮືອນ**

ຕົວຊີ້ວັດສຳລັບ ຄົວເຮືອນມີດັ່ງນີ້:

- ມີສັນຍາການເກັບມ້ຽນ ແລະ ແຍກຂີ້ເຫຍື້ອ ກັບ ອພບຕ ຫຼື ໜ່ວຍບໍລິການເກັບມ້ຽນຂີ້ເຫຍື້ອ;
- ມີຖັງຂີ້ເຫຍື້ອທີ່ມີຝາປິດ ຫຼື ກະຕ່າເກັບມ້ຽນຂີ້ເຫຍື້ອ ສະເພາະຄົວເຮືອນ;
- ມີລະບົບລະບາຍນໍ້າເປື້ອນ ພ້ອມທັງມີການຄຸ້ມຄອງ ແລະ ອະນາໄມ ເປັນປົກກະຕິ;
- ຕ້ອງເຮັດອະນາໄມຮັກສາຄວາມສະອາດບໍລິເວນເດີ່ນເຮືອນ ແລະ ເຂດສາທາລະນະໃນຂອບເຂດໜ້າເຮືອນຂອງຕົນເອງ ເປັນປົກກະຕິ;
- ບໍ່ໃຫ້ມີສິ່ງເປິເປື້ອນເຊັ່ນ: ຂີ້ເຫຍື້ອ ແລະ ນໍ້າເປື້ອນ ຊະຊາຍໃຫ້ໄດ້ 90% ຂຶ້ນໄປ;
- ບໍ່ໃຫ້ມີການຈູດຂີ້ເຫຍື້ອໃນບໍລິເວນເດີ່ນເຮືອນໃຫ້ໄດ້ 100%;
- ບໍ່ໃຫ້ປ່ອຍສັດລ້ຽງຊະຊາຍຕາມຊຸມຊົນບ້ານ ແລະ ສະຖານທີ່ສາທາລະນະໃຫ້ໄດ້ 100%.

**ໝວດທີ 3**

**ວຽກງານ ງາມຕາ**

**ມາດຕາ 19 ໂຄງການພັດທະນາ**

ຕົວຊີ້ວັດສຳລັບໂຄງການພັດທະນາມີດັ່ງນີ້:

- ມີການຕົບແຕ່ງ, ປະດັບຕົ້ນໄມ້, ດອກໄມ້ພາຍໃນພື້ນທີ່ ແລະ ເສັ້ນທາງຂອງໂຄງການກວມ 80% ຂອງພື້ນທີ່;
- ມີການຕົບແຕ່ງລະບົບໄຟສະຫວ່າງ ແລະ ໄຟເຍືອງທາງໃນເຂດໂຄງການກວມ 70% ຂອງພື້ນທີ່;
- ມີສະຖານທີ່ຈອດລົດພະນັກງານ ແລະ ລົດແຂກເປັນລະບົບ ມີ 1 ຈຸດ ຂຶ້ນໄປ;
- ມີປ້າຍໂຄສະນາ ແລະ ປ້າຍຄຳຂວັນທີ່ຕິດພັນກັບໂຄງການ ມີ 3 ຈຸດຂຶ້ນໄປ;
- ຕົບແຕ່ງ, ປະດັບເຄຫາສະຖານ, ສະຖານທີ່ຕ່າງໆໃຫ້ໄດ້ 90% ຂອງພື້ນທີ່;
- ການຂຸດດິນ, ຈົກດິນ, ຖົມດິນຕ້ອງໄດ້ຮັບການອະນຸຍາດຈາກພາກສ່ວນກ່ຽວຂ້ອງຂອງລັດ ຈຶ່ງລົງມືປະຕິບັດໄດ້.

**ມາດຕາ 20 ເທດສະບານເມືອງ ແລະ ສະຖານທີ່ຕ່າງໆ**

ສຳລັບ ຕົວຊີ້ວັດເທດສະບານເມືອງ ຊຶ່ງປະກອບມີ ສະຖານທີ່ບໍລິການຕ່າງໆ ເຊັ່ນ: ສະຖານທີ່ບໍລິການ, ແຫຼ່ງທ່ອງທ່ຽວ, ຕະຫຼາດ, ສະໜາມບິນ, ຄິວລົດ, ໂຮງໝໍ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ ມີດັ່ງນີ້:

- ມີການຈັດສັນ, ຕົບແຕ່ງ ແລະ ປະດັບຕົ້ນໄມ້, ສວນສາທາລະນະ, ສວນດອກໄມ້, ໂຖດອກໄມ້, ເດີ່ນຫຍ້າ, ດອກໄມ້ແຄມທາງ ແລະ ຖະໜົນຫົນທາງເປັນລະບຽບຮຽບຮ້ອຍດີ;
- ມີການຈັດສັນຫ້າງຮ້ານບໍລິການໃຫ້ຈົບງາມ ແລະ ເປັນລະບຽບຮຽບຮ້ອຍດີ;
- ເປັນເຈົ້າການຮັກສາຄວາມສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມພາຍໃນເມືອງ ເປັນ

ປົກກະຕິ;

- ມີສ່ວນຮ່ວມ ແລະ ປະກອບສ່ວນ ໃນການສ້າງຂະບວນການ ຫຼື ກິດຈະກຳຕ່າງໆຂອງເມືອງ ແລະ ວັນສຳຄັນຂອງຊາດ ແລະ ຂອງພັກເປັນປົກກະຕິ.

**ມາດຕາ 21 ສຳລັບ ຫ້ອງການສຳນັກງານພາກລັດ ແລະ ເອກະຊົນ**

ຕົວຊີ້ວັດສຳລັບ ຫ້ອງການສຳນັກງານພາກລັດ ແລະ ເອກະຊົນມີດັ່ງນີ້:

- ມີການຈັດສັນ ແລະ ຕົບແຕ່ງ, ປະດັບຕົ້ນໄມ້, ສວນດອກໄມ້, ໂຖດອກໄມ້, ເດີ່ນຫຍ້າ, ສວນຄົວ, ກຳແພງ ແລະ ຮົ້ວຫ້ອງການສຳນັກງານໃຫ້ໄດ້ 90%;

- ເປັນເຈົ້າການຮັກສາຄວາມສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມ ພາຍໃນຫ້ອງການສຳນັກງານ ເປັນປົກກະຕິ;

- ມີສ່ວນຮ່ວມ ແລະ ປະກອບສ່ວນ ໃນການສ້າງຂະບວນການ ຫຼື ກິດຈະກຳຕ່າງໆ ຂອງຫ້ອງການສຳນັກງານ ແລະ ວັນສຳຄັນຂອງຊາດ ເປັນປົກກະຕິ.

**ມາດຕາ 22 ໂຮງຮຽນ**

ຕົວຊີ້ວັດສຳລັບໂຮງຮຽນງາມຕາ ມີດັ່ງນີ້:

- ມີການຈັດສັນ, ຕົບແຕ່ງ ແລະ ປະດັບປະດາ ຕົ້ນໄມ້, ສວນດອກໄມ້, ໂຖດອກໄມ້, ເດີ່ນຫຍ້າ , ສວນຄົວ, ກຳແພງ ແລະ ຮົ້ວໂຮງຮຽນ ເປັນລະບຽບຮຽບຮ້ອຍ;

- ເປັນເຈົ້າການຮັກສາຄວາມສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມ ພາຍໃນໂຮງຮຽນ ເປັນປົກກະຕິ;

- ມີສ່ວນຮ່ວມ ແລະ ປະກອບສ່ວນ ໃນການສ້າງຂະບວນ ຫຼື ກິດຈະກຳຕ່າງໆ ຂອງໂຮງຮຽນ ແລະ ວັນສຳຄັນຂອງຊາດ ເປັນປົກກະຕິ.

**ມາດຕາ 23 ບ້ານ**

ຕົວຊີ້ວັດສຳລັບບ້ານ ມີດັ່ງນີ້:

- ມີການຈັດສັນ, ຕົບແຕ່ງ ແລະ ປະດັບປະດາຕົ້ນໄມ້, ສວນດອກໄມ້, ໂຖດອກໄມ້, ເດີ່ນຫຍ້າ ເປັນລະບຽບຮຽບຮ້ອຍ;

- ເປັນເຈົ້າການຮັກສາຄວາມສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມ ພາຍໃນບ້ານ ເປັນປົກກະຕິ;

- ມີສ່ວນຮ່ວມ ແລະ ປະກອບສ່ວນ ໃນຂະບວນການ ຫຼື ກິດຈະກຳຕ່າງໆຂອງບ້ານ ແລະ ວັນສຳຄັນຂອງຊາດ ເປັນປົກກະຕິ;

**ມາດຕາ 24 ຄົວເຮືອນ**

ຕົວຊີ້ວັດສຳລັບຄົວເຮືອນ ມີດັ່ງນີ້:

- ມີການຈັດສັນ, ຕົບແຕ່ງ ແລະ ປະດັບປະດາຕົ້ນໄມ້, ສວນດອກໄມ້, ໂຖດອກໄມ້, ເດີ່ນບ້ານ, ສວນຄົວ,ກຳແພງ ແລະ ຮົ້ວເຮືອນ ເປັນລະບຽບຮຽບຮ້ອຍ;

- ເປັນເຈົ້າການຮັກສາຄວາມສະອາດ ແລະ ປົກປັກຮັກສາສິ່ງແວດລ້ອມ ພາຍໃນຄົວເຮືອນ ເປັນປົກກະຕິ;

- ເປັນເຈົ້າການປະກອບສ່ວນໃນຂະບວນການລວມຂອງບ້ານໃນວັນສຳຄັນຕ່າງໆເປັນຕົ້ນ ຂະບວນການອະນາໄມ, ປະດັບປະດາ, ປົກປັກຮັກສາຄວາມສະຫງົບ ແລະ ອື່ນໆ.

## ພາກທີ III
## ປະເພດສິ່ງເສດເຫຼືອ ແລະ ການກຳຈັດສິ່ງເສດເຫຼືອ

**ມາດຕາ 25 ປະເພດສິ່ງເສດເຫຼືອ**

ສິ່ງເສດເຫຼືອມີ 2 ປະເພດ ດັ່ງນີ້:

1. ສິ່ງເສດເຫຼືອທົ່ວໄປ: ແມ່ນສິ່ງເສດເຫຼືອຕ່າງໆທີ່ເໜົ່າເປື່ອຍໄວ, ສາມາດນຳໃຊ້ຄືນ ແລະ ນຳໄປຜະລິດຄືນໃໝ່ໄດ້ເຊັ່ນ: ໃບໄມ້, ເສດພືດຜັກ, ເສດອາຫານ, ຢາງ, ແກ້ວ, ເຈ້ຍ, ໂລຫະ ແລະ ອື່ນໆ;

2. ສິ່ງເສດເຫຼືອເປັນພິດ ຫຼື ອັນຕະລາຍແມ່ນ ສິ່ງເສດເຫຼືອທີ່ບັນຈຸ ຫຼື ຫຸ້ມຫໍ່ສານເຄມີຕ່າງໆທີ່ບໍ່ສາມາດນຳໃຊ້ໄດ້ອີກ ຫຼື ບໍ່ສາມາດນຳໄປຜະລິດຄືນໃໝ່ໄດ້ເຊັ່ນ: ຖ່ານໄຟສາຍ, ດອກໄຟ, ກະປ໋ອງຢາສີດຍຸງ ເຂັມສັກຢາ, ກັບໄຟມ ວັດຖຸລະເບີດ, ວັດຖຸໄວໄຟ, ສານເຄມີ, ສິ່ງເສດເຫຼືອເອເລັກໂຕຣນິກ, ໝໍ້ໄຟເກົ່າ, ຂີ້ເຫຍື້ອອັນຕະລາຍອື່ນໆ ລວມທັງນ້ຳເປື້ອນຈາກໂຮງໝໍ, ໂຮງງານອຸດສະຫະກຳ ເປັນຕົ້ນ ໂຮງງານທີ່ນຳໃຊ້ສານເຄມີ, ກຳມັນຕະພາບລັງສີເຂົ້າໃນການຜະລິດ, ໂຮງງານປຸງແຕ່ງແຮ່ທາດ, ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ໂຮງງານຟອກໜັງແລະ ອື່ນໆ.

**ມາດຕາ 26 ການກຳຈັດສິ່ງເສດເຫຼືອ.**

ການກຳຈັດສິ່ງເສດເຫຼືອທົ່ວໄປທີ່ບໍ່ເປັນພິດ ຕ້ອງທຳລາຍຕາມວິທີການ, ເຕັກນິກ ແລະ ໃນເຂດທີ່ໄດ້ກຳນົດໄວ້ຕາມລະບຽບການ.

ການກຳຈັດສິ່ງເສດເຫຼືອເປັນພິດ ແລະ ອັນຕະລາຍຕ້ອງໄດ້ບຳບັດ, ຖິ້ມ, ຈູດ, ເຜົາ, ຝັງ ຫຼື ທຳລາຍ ຕາມວິທີການ, ເຕັກນິກ ແລະ ໃນເຂດທີ່ໄດ້ກຳນົດຕາມລະບຽບການ,

ສຳລັບສະຖານທີ່ຖິ້ມຂີ້ເຫຍື້ອຂອງເມືອງ, ບ້ານ, ໂຮງໝໍ, ຄລີນິກ, ຫ້ອງວິໄຈ, ສຳນັກງານ, ອົງການ, ບໍລິສັດ, ໂຮງຈັກໂຮງງານ ແລະ ອື່ນໆນັ້ນ ໃຫ້ຂະແໜງການກ່ຽວຂ້ອງເປັນຜູ້ກຳນົດ ໂດຍປະສານສົມທົບກັບຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳດັ່ງນີ້:

1. ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ, ເກັບຮັກສາ, ນຳໃຊ້, ນຳໄປຜະລິດຄືນໃໝ່ ແລະ ທຳລາຍປະເພດສານເຄມີທີ່ເປັນພິດ, ສານເຄມີທຳລາຍຊັ້ນໂອໂຊນ, ວັດຖຸປະກອບການ ທີ່ບັນຈຸສານເຄມີທຳລາຍຊັ້ນໂອໂຊນ, ກຳມັນຕະພາບລັງສີ, ສິ່ງເສດເຫຼືອອັນຕະລາຍ ແລະ ສານເຄມີອົງຄະທາດເປັນພິດຕົກຄ້າງ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ເກີນມາດຖານຄຸນນະພາບສິ່ງແວດລ້ອມ ແຫ່ງຊາດກຳນົດໄວ້ ເປັນຕົ້ນ ມົນລະພິດທາງນ້ຳ, ອາກາດ ແລະ ດິນ ແລະ ອື່ນໆ;

3. ຈູດ, ຖິ້ມ ແລະ ປ່ອຍສິ່ງເສດເຫຼືອຂີ້ເຫຍື້ອ, ນ້ຳເປື້ອນ ລົງໃສ່ຮ່ອງນ້ຳ, ແມ່ນ້ຳ, ແຫຼ່ງນ້ຳທຳມະຊາດ ຫຼື ສະຖານທີ່ສາທາລະນະອື່ນໆ ໂດຍບໍ່ຖືກຕ້ອງຕາມລະບຽບ ແລະ ມາດຖານເຕັກນິກ;

4. ຕັດຕົ້ນໄມ້, ທຳລາຍດອກໄມ້ ໃນເຂດສາທາລະນະຢ່າງເດັດຂາດ, ກໍລະນີມີຄວາມຈຳເປັນຕ້ອງໄດ້ຕັດຕົ້ນໄມ້ໃນເທດສະບານ ເປັນຕົ້ນ ກ້ອງສາຍໄຟຟ້າ, ໜ້າຕຶກອາຄານ, ໜ້າເຮືອນ ແລະ ບ່ອນອື່ນໆ ຕ້ອງໄດ້ຂໍອະນຸຍາດ ຈາກອົງການຄຸ້ມຄອງທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງຂໍ້ຕົກລົງສະບັບນີ້;

5. ຂຸດດິນ, ຈົກດິນ, ຂົນດິນ ແລະ ຖົມດິນ ໃນເທດສະບານເມືອງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຜິດຕໍ່ກົດໝາຍ ແລະ ລະບຽບການ;

6. ຂົນສົ່ງດິນ, ຫີນ ແລະ ຊາຍ ຈາກສະຖານທີ່ໜຶ່ງໄປຍັງສະຖານທີ່ໜຶ່ງ ທີ່ບໍ່ມີຜ້າບັດປົກຫຸ້ມ ເພື່ອຮັບປະກັນບໍ່ໃຫ້ມີເສດດິນ, ຫີນ ແລະ ຊາຍ ຕົກເຮ່ຍໃສ່ເສັ້ນທາງການຂົນສົ່ງ;

7. ທຳລາຍຊັບສິນລວມຂອງລັດໃນເຂດສາທາລະນະ;

8. ກຳຈັດ ຫຼື ທຳລາຍສິ່ງເສດເຫຼືອທີ່ເປັນພິດ ແລະ ເປັນອັນຕະລາຍ ດ້ວຍຕົນເອງເດັດຂາດ;

9. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດໂດຍບໍ່ມີມູນຄວາມຈິງ;

10. ຖິ້ມຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຊະຊາຍ ຕາມສະຖານທີ່ສາທາລະນະ ແລະ ແຄມທາງເດັດຂາດ

11. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມສຳລັບຜູ້ປະກອບການ ແລະ ນັກລົງທຶນ**

ຫ້າມຜູ້ປະກອບການ ແລະ ນັກລົງທຶນມີພຶດຕິກຳດັ່ງນີ້:

1. ດຳເນີນໂຄງການ ຫຼືທຸລະກິດ ໂດຍບໍ່ໄດ້ສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

2. ສ້າງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ; ຫຼື ເກີນມາດຖານສິ່ງແວດລ້ອມແຫ່ງຊາດກຳນົດໄວ້;

3. ຖິ້ມຂີ້ເຫຍື້ອຊະຊາຍຕາມເຂດສາທາລະນະ ແລະ ປ່ອຍນ້ຳເປື້ອນທີ່ບໍ່ໄດ້ຜ່ານຂະບວນບຳບັດ ລົງສູ່ແຫຼ່ງນ້ຳທຳມະຊາດຢ່າງເດັດຂາດ;

4. ຫຼົບຫຼີກການປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ການແກ້ໄຂຜົນກະທົບທີ່ເກີດຈາກກິດຈະການຂອງຕົນ;

5. ປອມແປງເອກະສານທາງການຂອງພາກລັດ ແລະ ໃຫ້ຂໍ້ມູນຂ່າວສານທີ່ບໍ່ຖືກກັບຄວາມຈິງ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານມີພຶດຕິກຳດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ;

2. ໃຊ້ອຳນາດເກີນຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;

3. ປະຕິບັດໜ້າທີ່ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ອອກຄຳສັ່ງ, ກຳນົດລະບຽບການ, ນະໂຍບາຍຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງກ່ຽວຂ້ອງ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ ກົດໝາຍ ແລະ ລະບຽບການ.

## ພາກທີ V
## ອົງການຄຸ້ມຄອງ ແລະ ກວດກາ ການຈັດຕັ້ງປະຕິບັດ ວຽກງານຂຽວ ສະອາດ ງາມຕາ
## ໝວດທີ 1
## ອົງການຄຸ້ມຄອງ

**ມາດຕາ 30 ອົງການຄຸ້ມຄອງການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ**

ອົງການປົກຄອງແຂວງຫົວພັນ ຄຸ້ມຄອງການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງຫົວພັນ ໂດຍມອບໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ

ຂັ້ນແຂວງ, ເມືອງ ແລະ ບ້ານ ໃນການຈັດຕັ້ງຜັນຂະຫຍາຍວຽກງານດັ່ງກ່າວ ລວມທັງຮູບແບບ ແລະ ວິທີການປະເມີນ.

ອົງການ ຄຸ້ມຄອງ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ປະກອບດ້ວຍ:

1. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ( ພຊສ ); ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ( ຫຊສ ) ແລະ ໜ່ວຍງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບ້ານ ( ໜຊສ );

2. ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ ( ຫຍທຂ );

3. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ( ອພບຕ ) ສຳລັບເທດສະບານເມືອງຊຳເໜືອ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ**

1. ເປັນເສນາທິການໂດຍກົງໃຫ້ອົງການປົກຄອງແຂວງ ໃນການຄົ້ນຄ້ວາ, ການວາງແຜນ, ການຕິດຕາມ, ການປະເມີນຜົນ ກ່ຽວກັບວຽກງານ ຂຽວ ສະອາດ ງາມຕາ;

2. ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງຂອງແຂວງ ແລະ ຫ້ອງການກ່ຽວຂ້ອງຂອງເມືອງ ເພື່ອກະກຽມຄວາມພ້ອມ, ເຄື່ອງມືໃນການເກັບກຳຂໍ້ມູນ, ກຸ່ມເປົ້າໝາຍ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ;

3. ເປັນເຈົ້າການໂຄສະນາ ເຜີຍແຜ່ ແລະ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ໃນທຸກອົງການຈັດຕັ້ງຂອງພັກ - ລັດ ແລະ ປະຊາຊົນບັນດາເຜົ່າ ໃຫ້ຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

4. ສະເໜີແຕ່ງຕັ້ງຄະນະຮັບຜິດຊອບຂັ້ນແຂວງ, ເມືອງ ແລະ ບ້ານ;

5. ໂຈະ ຫຼື ຖອນໃບຢັ້ງຢືນສິ່ງແວດລ້ອມ ເມື່ອເຫັນວ່າຜູ້ພັດທະນາໂຄງການ ຫຼື ກິດຈະການບໍ່ປະຕິບັດຕາມກົດໝາຍ ແລະ ລະບຽບການ ຫຼື ກິດຈະການໂຄງການມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ບໍ່ສາມາດແກ້ໄຂໄດ້;

6. ສະເໜີຂັ້ນເທິງພິຈາລະນາອອກໃບຢັ້ງຢືນຮັບຮອງ ວຽກງານ ຂຽວ ສະອາດ ງາມຕາ ໃຫ້ພາກສ່ວນຕ່າງໆ ທີ່ສາມາດປະຕິບັດໄດ້ຕາມມາດຕະຖານ;

7. ສະເໜີລາຍງານ ສະພາບການເຄື່ອນໄຫວຂອງການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ຕໍ່ຂັ້ນເທິງ ເພື່ອຂໍທິດຊີ້ນຳໃນການປະຕິບັດ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງ ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ**

1. ເປັນເສນາທິການໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງເມືອງ ໃນການຈັດຕັ້ງຜັນຂະຫຍາຍ ວຽກງານ ຂຽວ ສະອາດ ງາມຕາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ເປັນເຈົ້າການເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ປະຊາຊົນຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ພ້ອມທັງການຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ຢູ່ໃນລະດັບຂັ້ນເມືອງ ແລະ ຂັ້ນບ້ານຂອງຕົນ ຢ່າງເປັນປົກກະຕິ;

3. ເປັນເຈົ້າການໃນການກຳນົດກຸ່ມເປົ້າໝາຍ, ຕາມແບບຟອມປະເມີນຜົນ ແລະ ຕົວຊີ້ວັດທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ພ້ອມທັງເປັນຜູ້ລາຍງານ ແລະ ສະເໜີການຢັ້ງຢືນ ນາມມະຍົດ ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ໃຫ້ຂະແໜງການຕ່າງໆ ຕໍ່ອົງການປົກຄອງເມືອງ ແລະ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເປັນປົກກະຕິ;

4. ໂຈະ ຫຼື ຖອນໃບຢັ້ງຢືນ ກ່ຽວກັບ ແຜນຄຸ້ມຄອງສິ່ງແວດລ້ອມຂອງທຸລະກິດຄອບຄົວ ທີ່ເຫັນວ່າດຳເນີນໄປບໍ່ສອດຄ່ອງກັບລະບຽບກົດໝາຍ;

5. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງເມືອງເປັນແຕ່ລະໄລຍະ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ**

1. ເປັນເສນາທິການໂດຍກົງໃຫ້ອົງການປົກຄອງເມືອງ ໃນການສຳຫຼວດ, ອອກແບບຜັງເມືອງ ໂດຍຕິດພັນກັບການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ;

2. ເປັນເຈົ້າການໂດຍກົງໃນການເຂົ້າຫາແຫຼ່ງທຶນເພື່ອການກໍ່ສ້າງ ຫຼື ປັບປຸງສະໜາມຂີ້ເຫຍື້ອຂອງເມືອງ, ລະບົບບຳບັດນ້ຳເປື້ອນໃນຕົວເມືອງ;

3. ເປັນເຈົ້າການໃນການຄຸ້ມຄອງການຂຸດດິນ, ຈົກດິນ, ຂົນດິນ ແລະ ຖົມດິນໃນເຂດສະບານເມືອງຂອງຕົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ ຕາມຂໍ້ຕົກລົງສະບັບນີ້ ໂດຍມີການປຶກສາຫາລື ແລະ ປະສານສົມທົບກັນຢ່າງໃກ້ຊິດ ກັບຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ໜ່ວຍງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນບ້ານ ກ່ອນການອະນຸຍາດ; ສຳລັບເມືອງຊຳເໜືອ ແມ່ນມອບໃຫ້ ອພບຕ ເປັນເຈົ້າການ, ສ່ວນເມືອງອື່ນ ແມ່ນຄວາມຮັບຜິດຊອບຂອງ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ.

4. ເຂົ້າຮ່ວມຢ່າງເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ, ການຕິດຕາມ ແລະ ປະເມີນຜົນ;

5. ເປັນເຈົ້າການໂຄສະນາ ເຜີຍແຜ່ ແລະ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ໃຫ້ບັນດາອົງການຈັດຕັ້ງຕ່າງໆທີ່ນອນໃນຄວາມຮັບຜິດຊອບ ຂອງຕົນ;

6. ລາຍງານຂໍທິດຊີ້ນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານຂຽວ ສະອາດ ງາມຕາ ທີ່ມີຄວາມຈຳເປັນ, ຫຍຸ້ງຍາກສັບສົນຈາກພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ກົດໝາຍຂອງລັດ;

**ມາດຕາ 34 ສິດ ແລະ ໜ້າທີ່ຂອງ ອົງການ ພັດທະນາ ແລະ ບໍລິຫານ ຕົວເມືອງຊຳເໜືອ**

1. ເປັນເຈົ້າການໃນການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງຢູ່ເຂດສະບານເມືອງຊຳເໜືອ;

2. ເປັນເຈົ້າການເຂົ້າຮ່ວມການຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ຢູ່ເຂດສະບານເມືອງຊຳເໜືອ;

3. ເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈ ພ້ອມທັງເປັນເຈົ້າການປະເມີນມາດຖານຕ່າງໆຕາມທີ່ໄດ້ຮັບມອບໝາຍຈາກ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ເປັນເຈົ້າການໃນການຄຸ້ມຄອງການຈົກດິນ, ຂົນດິນ ແລະ ຖົມດິນໃນເຂດສະບານເມືອງຊຳເໜືອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ ຕາມຂໍ້ຕົກລົງສະບັບນີ້ ໂດຍມີການປຶກສາຫາລື ແລະ ປະສານສົມທົບກັນຢ່າງໃກ້ຊິດກັບ ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ ແລະ ໜ່ວຍງານ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນບ້ານ ກ່ອນການອະນຸຍາດ;

5. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ໃຫ້ການນຳເມືອງຊຳເໜືອເປັນແຕ່ລະໄລຍະ;

6. ເປັນເຈົ້າການໃນການຊອກຫາແຫຼ່ງທຶນໃນການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງ ໜ່ວຍງານສິ່ງແວດລ້ອມຂັ້ນບ້ານ**

1. ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ຄຳສັ່ງຂອງເມືອງກ່ຽວກັບ ວຽກງານ ຂຽວ ສະອາດ ງາມຕາ ໃຫ້ບັນລຸໄດ້ຕາມລະດັບຄາດໝາຍ;

2. ໂຄສະນາເຜີຍແຜ່ວຽກງານ ຂຽວ ສະອາດ ງາມຕາ ໃຫ້ປະຊາຊົນບັນດາເຜົ່າພາຍໃນບ້ານຂອງຕົນຮັບຮູ້ເຂົ້າໃຈໃນການຈັດຕັ້ງປະຕິບັດ;

3. ເກັບກຳຂໍ້ມູນ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ພ້ອມທັງສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ຂັ້ນເທິງຮັບຮູ້ ເປັນແຕ່ລະໄລຍະ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 2
## ອົງການກວດກາ

**ມາດຕາ 36 ອົງການກວດກາ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ**

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກມີສະພາປະຊາຊົນແຂວງ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງແຂວງ, ຂະແໜງກວດກາລັດ ຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 37 ສິດ ແລະ ໜ້າທີ່ຂອງອົງການກວດກາ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ**

ອົງການກວດກາ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ປະກອບດ້ວຍ:

1. ສ້າງແຜນງານ, ແຜນການ ກວດກາ ການຈັດຕັ້ງປະຕິບັດ ວຽກງານ ຂຽວ ສະອາດ ງາມຕາ ປະຈຳປີ ໂດຍຮັບປະກັນໃຫ້ບັນດາໂຄງການລົງທຶນ, ຕົວເມືອງ, ສຳນັກງານອົງການພາກລັດ ແລະ ເອກະຊົນ, ໂຮງຮຽນ, ກຸ່ມບ້ານ ແລະ ບ້ານ ສາມາດປະຕິບັດມາດຕະຖານ ວຽກງານ ຂຽວ ສະອາດ ງາມຕາ ແລະ ເພື່ອຮັບປະກັນບໍ່ສ້າງຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ;

2. ກວດກາ ການຈັດຕັ້ງປະຕິບັດ ມາດຕະຖານ ວຽກງານ ຂຽວ ສະອາດ ງາມຕາ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານກວດກາຂອງຕົນ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ**

ບັນດາຕົວເມືອງ, ສຳນັກງານ ອົງການຈັດຕັ້ງ ທັງພາກລັດ - ເອກະຊົນ, ໂຮງໝໍ, ໂຮງຮຽນ, ບ້ານ, ໂຄງການ ແລະ ກິດຈະການລົງທຶນຕ່າງໆ ທີ່ໄດ້ປະກອບສ່ວນໃນການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດ ງາມຕາ ຖືກຕ້ອງ ແລະ ຄົບຖ້ວນ ຕາມມາດຕະຖານ ແລະ ຕົວຊີ້ວັດ 90% ຂຶ້ນໄປທີ່ກຳນົດໃນຂໍ້ຕົກລົງສະບັບນີ້ຈະໄດ້ຮັບໃບຢັ້ງຢືນນາມມະຍົດຕາມລະບຽບການກຳນົດໄວ້.

**ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຕໍານິວິຈານ, ໂຈະ ຫຼື ຖອນໃບຢັ້ງຢືນດ້ານສິ່ງແວດລ້ອມ, ຟື້ນຟູຜົນກະທົບ, ລົງວິໄນ ປັບໃໝ ,ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດໍາເນີນຄະດີຕາມກົດໝາຍ;

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເມືອງທຸກເມືອງທົ່ວແຂວງ ເປັນເຈົ້າການໃນການປະສານກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງຫົວພັນ**

ແຂວງຫົວພັນ

ເຈົ້າແຂວງ

ວັນໄຊ ແພງຊຸມມາ
Vanxay PHENGSOUMMA